# ນາຍົກລັດຖະມົນຕີຈາກບັນດາປະເທດອະນຸພາກພື້ນແມ່ນ້ຳຂອງກຳນົດທິດທາງອະນາຄົດ

ນາຍົກລັດຖະມົນຕີຈາກ 6 ປະເທດທີ່ມີເນື້ອທີ່ຕິດກັບແມ່ນ້ຳຂອງ ມີກຳນົດການປຶກສາຫາລື ແລະ ກຳນົດທິດທາງການຮ່ວມມື ໃນກອງປະຊຸມສຸດຍອດອະນຸພາກພື້ນແມ່ນ້ຳຂອງຄັ້ງທີ 3 ທີ່ນະຄອນຫລວງວຽງຈັນ ໃນ ວັນທີ 31 ມີນາ 2008 ນີ້. ບັນດາຜູ້ນຳຈະສົນທະນາກ່ຽວກັບແຜນປະຕິບັດງານຮ່ວມມື ເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ສົ່ງເສີມການພັດທະນາແບບຍືນຍົງ ໃນອະນຸພາກພື້ນ ໂດຍຜ່ານການເຊື່ອມຕໍ່ການຂະຫຍາຍຕົວທາງດ້ານການ ຄົມມະນາຄົມ, ຂົນສົ່ງ ແລະ ສື່ສານ ດ້ວຍການປັບປຸງຂໍ້ຕົກລົງທາງດ້ານການຄ້າ ແລະ ຄວາມພະຍາຍາມໃນການຄຸ້ມ ຄອງສິ່ງແວດລ້ອມຂອງພາກພື້ນໃຫ້ມີປະສິດທິພາບ.

ທ່ານ ຮາຣູຮິໂກະ ກຸໂຣດະ(Haruhiko Kuroda), ປະທານທະນາຄານພັດທະນາອາຊີ(ADB) ກໍໄດ້ເຂົ້າ ຮ່ວມໃນກອງປະຊຸມດັ່ງກ່າວ. ອີງຕາມບົດລາຍງານຂອງ ເອດີບີ (ADB): ນັບຕັ້ງແຕ່ການເລີ່ມຕົ້ນແຜນງານອະນຸພາກ ພື້ນແມ່ນ້ຳຂອງ(GMS) ແຕ່ປີ 1992, GMS ໄດ້ພັດທະນາ ຈົນກາຍເປັນພາກພື້ນໜຶ່ງທີ່ເຕີບໂຕໄວຢູ່ໃນໂລກ; ເຊິ່ງຄິດ ເປັນມູນຄ່າຍອດຜະລິດຕະພັນພາຍໃນສະເລ່ຍປະມານ 6% ໃນຊຸມປີຜ່ານມາ. ຂະແໜງການສົ່ງອອກຂອງບັນດາປະ ເທດອະນຸພາກພື້ນ ບໍ່ລວມ ສປ ຈີນ ແມ່ນເພີ່ມຂຶ້ນ 4 ເທົ່າ; ຈາກ 37 ຕື້ໂດລາ ໃນປີ 1992 ເປັນ 179 ຕື້ໂດລາໃນປີ 2006 ແລະ ການລົງທຶນໂດຍກົງຈາກຕ່າງປະເທດ ໃນບັນດາປະເທດອະນຸພາກພື້ນ ເພີ່ມຂຶ້ນສາມເທົ່າ; ຈາກ 2 ຕື້ໂດລາ ໃນປີ 1992 ເປັນ 7 ຕື້ໂດລາ ໃນປີ 2005; ຈຳນວນນັກທ່ອງທ່ຽວໃນແຕ່ລະປີກໍ່ມີການເພີ່ມຂຶ້ນຈາກ 10 ລ້ານຄົນໃນປີ 1995 ເພີ່ມຂຶ້ນຫລາຍກວ່າ 22 ລ້ານຄົນ ໃນປີ 2006.

ຕະຫລອດໄລຍະ 15 ປີຜ່ານມາ, ການລົງທຶນໃນໂຄງການພັດທະນາອະນຸພາກພື້ນ ຈຳນວນ 34 ໂຄງການ ລວມມູນຄ່າທັງໝົດ 10 ຕື້ໂດລາ ເຊິ່ງໜຶ່ງໃນສາມຂອງມູນຄ່າການລົງທຶນຈຳນວນນີ້ແມ່ນມາຈາກການປະກອບສ່ວນ ຂອງ ADB. ທ່ານ ອາຈູນ ທາປັນ(Mr. Arjun Thapen), ຜູ້ບໍລິຫານພະແນກອາຊີຕາເວັນອອກສຽງໃຕ້ ຂອງ ADB ກ່າວວ່າ: ບັນດາຊາດ ແລະ ປະຊາກອນຈຳນວນ 320 ລ້ານຄົນທີ່ຕິດພັນກັບແມ່ນ້ຳຂອງ ໄດ້ຂ້າມຜ່ານຂໍ້ຫຍຸ້ງຍາກນາໆ ປະການ ເພື່ອຮ່ວມມືກັນໃນການສ້າງອະນາຄົດຮ່ວມກັນ ໃຫ້ມີຄວາມຈະເລີນກ້າວໜ້າ ແລະ ທ່ານໄດ້ກ່າວຕື່ມວ່າ: ເສັ້ນທາງໄປສູ່ຄວາມສຳເລັດອັນຕົ້ນຕໍຕະຫລອດໄລຍະ 15 ປີຜ່ານນີ້ ແມ່ນການບັນລຸຄວາມເຂົ້າໃຈອັນຊັດເຈນ ແລະ ຈະແຈ້ງຂອງບັນດາປະເທດໃນອະນຸພາກພື້ນແມ່ນ້ຳຂອງ ເປັນຕົ້ນແມ່ນດ້ານການປະສານງານ ແລະ ການຮ່ວມມື ລະຫວ່າງບັນດາປະເທດອ້ອມຂ້າງ.

ນັບແຕ່ປີ 1992 ເປັນຕົ້ນມາ, ADB ໄດ້ເປັນຜູ້ນຳທີ່ໃຫ້ການສະໜັບສະໜູນ ຕໍ່ກັບ ແຜນງານການຮ່ວມມືທາງ ດ້ານເສດຖະກິດ ຢູ່ໃນອະນຸພາກພື້ນແມ່ນ້ຳຂອງ; ສຳລັບແຜນງານ ອະນຸພາກພື້ນແມ່ນ້ຳຂອງ ໄດ້ເນັ້ນໃສ່ການພັດທະນາ ໃນ 9 ຂະແໜງການ ເຊິ່ງປະກອບດ້ວຍຂະແໜງການກະສິກຳ, ພະລັງງານ, ສິ່ງແວດລ້ອມ, ການພັດທະນາ ຊັບພະຍາກອນມະນຸດ, ການລົງທຶນຂອງພາກສ່ວນເອກະຊົນ, ການສື່ສານ, ການທ່ອງທ່ຽວ, ການຄ້າ ແລະ ການ ຄົມມະນາຄົມຂົນສົ່ງ. ໃນວັນທີ 31 ມີນາ 2008 ນີ້, ບັນດາປະເທດໃນອະນຸພາກພື້ນແມ່ນ້ຳຂອງຈະໄດ້ເຊັນຮັບຮອງເອົາ ແຜນປະຕິບັດງານ 5 ປີ(2008-2012) ເພື່ອສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຄວາມຈະເລີ ນກ້າວໜ້າພາຍໃນພາກພື້ນ.